## ເປົ້າໝາຍຂອງໂຄງການ:

ທຸລະກິດໂຮງສີເຂົ້າ, ທຸລະກິດອົບແຫ້ງເຂົ້າເປືອກ, ທຸລະກິດສົ່ງອອກເຂົ້າ, ທຸລະກິດເກັບຊື້-ອົບແຫ້ງສາລີ, ທຸລະກິດໂຮງສີສາລີ ແລະ ທຸລະກິດສົ່ງອອກສາລີ, ແລະ ທຸລະກິດເກັບຊື້-ຂາຍພືດຜັກໝາກໄມ້ ພາຍໃນແຂວງເປົ້າໝາຍລຸ່ມນີ້:

- ແຂວງ ຄຳມ່ວນ.
- ແຂວງ ບໍລິຄຳໄຊ.
- ແຂວງ ໄຊຍະບູລີ.
- ແຂວງ ວຽງຈັນ.
- ນະຄອນຫຼວງວຽງຈັນ.

## ເງື່ອນໄຂຂອງທຸລະກິດທີ່ສະໝັກຂໍທຶນ:

ທຸລະກິດໂຮງສີເຂົ້າ, ທຸລະກິດອົບແຫ້ງເຂົ້າເປືອກ, ທຸລະກິດສົ່ງອອກເຂົ້າ, ທຸລະກິດເກັບຊື້-ອົບແຫ້ງສາລີ, ທຸລະກິດໂຮງສີສາລີ ແລະ ທຸລະກິດສົ່ງອອກສາລີ, ແລະ ທຸລະກິດເກັບຊື້-ຂາຍພືດຜັກໝາກໄມ້ ພາຍໃນແຂວງເປົ້າໝາຍລຸ່ມນີ້:

- ໄດ້ຈົດທະບຽນທຸລະກິດຢູ່ໃນ ສປປ ລາວ.
- ດຳເນີນທຸລະກິດຢູ່ພາຍໃນແຂວງເປົ້າໝາຍ ຂອງໂຄງການ.
- ເປັນທຸລະກິດທີ່ມີກຳໄລ.
- ມີຖານະການເງິນທີ່ເຂັ້ມແຂງ.
- ມີບົດລາຍງານຖານະການເງິນຢ່າງຫນ້ອຍ ສອງປີຍ້ອນຫຼັງ.
- ມີຄວາມສົນໃຈທີ່ຈະເຮັດວຽກສົ່ງເສີມການຜະລິດຮ່ວມກັບກຸ່ມຜະລິດ.
- ມີຄວາມພ້ອມດ້ານວິຊາການ ແລະ ຄວາມສາມາດດ້ານການບໍລິຫານ.

## ສາມາດນຳໃຊ້ທຶນສະໜັບສະໜູນເພື່ອ:

**ໄດ້**

- ☑ ຈັດຊື້ເຄື່ອງຈັກໃໝ່ ແລະ ເຄື່ອງມືອຸປະກອນໃໝ່
- ☑ ຈ້າງຊ່ຽວຊານເພື່ອປັບປຸງຄຸນນະພາບສິນຄ້າ ແລະ ຫລຸດຜ່ອນການສູນເສຍຫຼັງການເກັບກ່ຽວ ແລະ ປຸງແຕ່ງ
- ☑ ຈ້າງຊ່ຽວຊານເພື່ອສ້າງຄວາມເຂັ້ມແຂງດ້ານຕະຫລາດ, ເຕັກນິກວິຊາການ ແລະ ຂະຫຍາຍກິດຈະການໃນການເຊື່ອມໂຍງກັບກຸ່ມຜະ ລິດກະສິກຳເປັນສິນຄ້າ
- ☑ ກໍ່ສ້າງພື້ນຖານໂຄງລ່າງໃນການຈັດການຫຼັງການເກັບກ່ຽວ ແລະ ປຸ່ງແຕ່ງ

## ບໍ່ສາມາດນຳໃຊ້ທຶນສະໜັບສະໜູນເພື່ອ:

**ບໍ່ໄດ້**

- ☒ ເປັນທຶນໝູນວຽນ
- ☒ ຊື້ທີ່ດິນ
- ☒ ຈ່າຍເປັນເງິນເດືອນໃຫ້ພະນັກງານ


### ທີ່ຢູ່ຂອງຫ້ອງການ:

AVCF/LACP (ຕຶກຫ້ອງການໂຄງການຂອງກະຊວງກະສິກຳ ແລະ ປ່າໄມ້),
ຖະໜົນໂພນໄຊ, ບ້ານໂພນໄຊ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ
ໂທ: +856-30-9193489, +856-20 55714303
ອີເມວ: daovanhsotouky@snv.org
tsiyavong@snv.org


# ໂຄງການຜະລິດກະສິກຳເປັນສິນຄ້າ ຢູ່ ສປປ ລາວ

Lao Agriculture Competitivenes Project (LACP)

# ທຶນສະໜັບສະໜູນທຸລະກິດກະສິກຳ

Agriculture Value Chain Facility (AVCF)

THE WORLD BANK IBRD · IDA | WORLD BANK GROUP

SNV

## ກ່ຽວກັບທຶນສະໜັບສະໜູນທຸລະກິດກະສິກຳ (AVCF):

AVCF ແມ່ນທຶນສະໜັບສະໜູນໃຫ້ແກ່ທຸລະກິດກະສິກຳ (Agri-businesses (ABs)) ໃນອົງປະກອບ B: ການສົ່ງເສີມທຸລະກິດກະສິກຳພາຍໃຕ້ ໂຄງການຜະລິດກະສິກຳເປັນສິນຄ້າ (LACP) ໂດຍໄດ້ຮັບທຶນກູ້ຢືມຈາກທະນາຄານໂລກ, ຈັດຕັ້ງປະຕິບັດໂດຍ ກະຊວງກະສິກຳ ແລະ ປ່າໄມ້ ແລະ ຮ່ວມມືກັບ ອົງການ SNV.

## AVCF ຊ່ວຍທຸລະກິດກະສິກຳແນວໃດ:

AVCF ໃຫ້ການຊ່ວຍເຫຼືອແກ່ຫົວໜ່ວຍທຸລະກິດກະສິກຳ ເພື່ອຍົກລະດັບເຄື່ອງມືການຈັດການຫຼັງການເກັບກ່ຽວ ແລະ ການປຸງແຕ່ງ, ສ້າງຄວາມສາມາດໃນການຄຸ້ມຄອງບໍລິຫານເພື່ອປັບປຸງຄຸນນະພາບຜະລິດພັນ ແລະ ເພີ່ມປະສິດພາບໃນການດຳເນີນງານ, ຫລຸດຜ່ອນການສູນເສຍຈາກຂັ້ນຕອນການປຸງແຕ່ງ ຂອງຕ່ອງໂສ້ການຜະລິດສິນຄ້າເຂົ້າ, ສາລີ ແລະ ພືດຜັກ.

## ຮູບແບບການຊ່ວຍເຫຼືອຂອງ AVCF:

1. ບໍລິການຄຳປຶກສາໂດຍບໍ່ໄດ້ເສຍຄ່າໃຫ້ແກ່ຫົວໜ່ວຍທຸລະກິດ ແລະ ສຶກສາວິໄຈຂໍ້ບົກພ່ອງໃນການດຳເນີນງານ ແລະ ອຸປະສັກຕໍ່ການລົງທຶນ ຊອກຫາວິທີແກ້ໄຂເພື່ອຍົກສູງປະສິດທິພາບ ແລະ ມາດຕະຖານ ການດຳເນີນງານຂອງຕ່ອງໂສ້ການຜະລິດເຂົ້າ, ສາລີ ແລະ ພືດຜັກ.
2. ຊ່ວຍຫົວໜ່ວຍທຸລະກິດໃນການກະກຽມ ແລະ ປະເມີນບົດສະເໜີ ການລົງທຶນແຜນທຸລະກິດລະອຽດ ເຮັດການຕິດຕາມການຈັດຕັ້ງປະຕິບັດແຜນທຸລະກິດ.
3. ໃຫ້ທຶນສະໜັບສະໜູນເພື່ອຍົກລະດັບການຈັດການຫຼັງການເກັບກ່ຽວ ແລະ ການປຸງແຕ່ງ ສ້າງຄວາມສາມາດໃນການບໍລິຫານປັບປຸງຄຸນນະພາບຂອງຜະລິດຕະພັນ, ເພີ່ມປະສິດທິພາບການດຳເນີນງານ, ຫລຸດຜ່ອນການສູນເສຍໃນຂະບວນການປຸງແຕ່ງ, ແລະ ເຊື່ອມໂຍງກັບກຸ່ມຜະລິດກະສິກຳເປັນສິນຄ້າ.

## ຄວາມຈຳກັດຂອງທຶນສະໜັບສະໜູນ:

ໂຄງການຈະປະກອບທຶນສະໜັບສະໜູນໃນອັດຕາສ່ວນ 50% ຂອງແຜນການທຸລະກິດທີ່ຜູ້ປະກອບການທຸລະກິດໄດ້ຍື່ນ ແລະໄດ້ອະນຸມັດ ຊຶ່ງວົງເງິນຂອງທຶນສະໜັບສະໜູນດັ່ງກ່າວຈະບໍ່ເກີນ:

ກ. USD 25,000 ຕໍ່ໜຶ່ງຫົວໜ່ວຍທຸລະກິດໃນຕ່ອງໂສ້ການຜະລິດສິນຄ້າພືດຜັກ.

ຂ. USD 125,000 ຕໍ່ໜຶ່ງຫົວໜ່ວຍທຸລະກິດໃນຕ່ອງໂສ້ການຜະລິດສິນຄ້າເຂົ້າ ແລະສາລີ.

## ຂັ້ນຕອນການຊ່ວຍເຫຼືອ:

| | |
|---|---|
| ເຜີຍແຜ່ຂໍ້ມູນ | ຈັດກອງປະຊຸມແນະນຳໂຄງການ, ແຈ້ງປະກາດທາງໂທລະພາບ, ວິທະຍຸ ແລະ ສື່ມວນຊົນຕ່າງໆ |
| ຮັບສະໝັກ | ຂຽນໃບສະໝັກ, ຂຽນບົດສະເໜີການລົງທຶນ, ຍື່ນບົດສະເໜີການ ລົງທຶນໃຫ້ໂຄງການ |
| ການປະເມີນ | ປະເມີນບົດສະເໜີການລົງທຶນ ໂດຍຄະນະກຳມະການເອກະລາດເຊີນທຸລະກິດທີ່ບົດສະເໜີການລົງທຶນຖືກຄັດເລືອກ ເພື່ອຂຽນແຜນທຸລະກິລະອຽດ |
| ແຜນທຸລະກິດ | ຂຽນແຜນທຸລະກິດລະອຽດກາ ໂດຍມີທີ່ປຶກສາໂຄງການ ແລະ ຜູ້ໃຫ້ບໍລິການເປັນຜູ້ຊ່ວຍຂຽນແຜນ |
| ອະນຸມັດ/ເຊັນຮັບຮອງ | ປະເມີນແຜນທຸລະກິດເຊັນຮັບຮອງການໃຫ້ທຶນສະໜັບສະໜູນ ໂດຍກະຊວງກະສິກຳ ແລະ ປ່າໄມ້ |
| ຈັດຕັ້ງປະຕິບັດ | ຈັດຕັ້ງປະຕິບັດແຜນທຸລະກິດທີ່ໄດ້ອະນຸມັດ, ໃຫ້ຄຳ ປຶກສາ, ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດ |